ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ແຫຼ່ງທຶນດອກເບ້ຍຕ່ຳ ຂອງລັດ ເຮັດໃຫ້ຊາວບ້ານມີກຳໄລຫຼາຍ



ທ່ານນາງ ຈັນສຸກ ສຸພາລີນ ຮອງນາຍບ້ານວຽງສາ, ເມືອງໄຊ, ແຂວງອຸດົມໄຊ ໄດ້ແຈ້ງໃຫ້ຮູ້ເຖິງຜົນຜະລິດກະສິກຳຂອງບ້ານໃນໄລຍະຜ່ານມາໂດຍອີງຕາມທິດຊີ້ນຳຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ; ໃນປີ 2014 ຂະແໜງສົ່ງເສີມກະສິກຳເມືອງໄຊ ໄດ້ຊຸກຍູ້ດ້ານວິຊາການ ແລະ ຈັດຕັ້ງເປັນກຸ່ມຜະລິດມີສະມາຊິກກຸ່ມປູກຜັກ 44 ຄອບຄົວ ລວມສະມາຊິກ 215 ຄົນ, ມີເຮືອນຮົ່ມ 168 ຫຼັງ, ເນື້ອທີ່ 2 ເຮັກຕາສາມາດເກັບກູ້ຜົນຜະລິດໄດ້ 200 ໂຕນຕໍ່ປີ; ລວມຍອດລາຍຮັບ 1,65 ຕື້ກ່ວາກີບ/ປີ; ປີ 2015-2016 ຂະຫຍາຍສະມາຊິກກຸ່ມ 45 ຄອບຄົວ, ມີສະມາຊິກລວມ 345 ຄອບຄົວ, ມີເນື້ອທີ 2,5 ເຮັກຕາ, ມີເຮືອນຮົ່ມ 117 ຫຼັງ; ເກັບກູ້ຜົນຜະລິດໄດ້ 425 ໂຕນ; ລວມຍອດລາຍຮັບ 2,92 ຕື້ກ່ວາກີບ/ປີ. ສຳລັບປີ 2019- 2020 ມີສະມາຊິກກຸ່ມເພີ່ມ 55 ຄອບຄົວ ມີພົນລະເມືອງລວມ 530 ຄົນ ມີເຮືອນຮົ່ມ 226 ຫຼັງ, ເນື້ອທີ່ 3 ເຮັກຕາ, ເກັບກູ້ຜົນຜະລິດໄດ້ 445 ໂຕນ, ລວມຍອດລາຍຮັບ 2,96 ຕື້ກ່ວາກີບ ໂດຍລວມແລ້ວທົ່ວບ້ານມີຍອດລາຍຮັບເປັນເງິນທັງໝົດ 10,39 ຕື້ກ່ວາກີບ.

ທ່ານ ພົງເພັດ ນວນມຸກດາວົງ ຮອງຫົວໜ້າສາຂາ ທະນາຄານນະໂຍບາຍ ອຸດົມໄຊ ໄດ້ຖືສຳຄັນໃນການສະໜອງແຫຼ່ງທຶນໃນການຜະລິດ, ພິເສດບ້ານວຽງສາເລີ່ມປ່ອຍສິນເຊື່ອປູກຜັກເຮືອນຮົ່ມແຕ່ປີ 2015 ເປັນຕົ້ນມາ ຊຶ່ງມີຄອບຄົວຕົວແບບສະສົມ 3 ຄອບຄົວເປັນຄອບຄົວປູກພືດຜັກມີ 2 ຄອບຄົວ, ສ້າງໂຕງຜັກເຮືອນຮົ່ມ 1 ຄອບຄົວ; ຕົກມາເຖິງປີ 2015 ໄດ້ປ່ອຍສິນເຊື່ອໃຫ້ບ້ານດັ່ງກ່າວ 4 ກຸ່ມ, ມີ 15 ຄອບຄົວໃນວົງເງິນ 255.000.000 ກີບ (ທຶນປູກຜັກ); ປີ 2017 ໄດ້ປ່ອຍສິນເຊື່ອໃຫ້ 28 ຄອບຄົວໃນວົງເງິນ 328.000.000 ກີບ (ທຶນປູກຜັກ); ປີ 2018 ໄດ້ປ່ອຍສິນເຊື່ອໃຫ້ 21 ຄອບຄົວໃນວົງເງິນ 395.000.000 ກີບ (ທຶນສ້າງເຮືອນຜັກເຮືອນຮົ່ມ) ແລະ ໃນປີ 2020 ໄດ້ປ່ອຍສິນເຊື່ອໃຫ້ 16 ຄອບຄົວໃນວົງເງິນ 235.000.000 ກີບ (ທຶນສ້າງເຮືອນຜັກເຮືອນຮົ່ມ).



ທ່ານຮອງນາຍບ້ານ ວຽງສາ ໄດ້ຢືນຢັນວ່າ: ປະຈຸບັນຊີວິດການເປັນຢູ່ຂອງຊາວບ້ານຂອງພວກເຮົາດີຂຶ້ນເທື່ອລະກ້າວຍ້ອນການປູກພືດຜັກປອດສານພິດໃນຮົ່ມເປັນສິນຄ້າ; ພ້ອມນັ້ນ, ກໍ່ໄດ້ຮັບການນຳພາ-ຊີ້ນຳຈາກຄະນະພັກ-ອຳນາດການປົກຄອງທຸກຂັ້ນ, ດ້ວຍການນຳພາດ້ານວິຊາການການຜະລິດ-ການຄ້າຈາກຂະແໜງການກະສິກຳ ແລະ ການຄ້າກໍ່ຄືໄດ້ຮັບແຫຼ່ງທຶນດອກເບ້ຍຕ່ຳຂອງລັດຖະບານຜ່ານທະນາຄານນະໂຍບາຍ ແລະ ສຳຄັນແທ້ໆແມ່ນການເອົາໃຈໃສ່ເຮັດແທ້ທຳຈິງ; ຈິດໃຈບຸກບືນ, ບາກບັ່ນບຸກບືນຂອງຊາວບ້ານທຸກຖ້ວນໜ້າຈຶ່ງເຮັດໃຫ້ບ້ານຂອງພວກເຮົາມີຊີວິດ ແລະ ໂສມໜ້າໃໝ່ຢ່າງຈະແຈ້ງ; ຂະນະດຽວກັນ, ກໍ່ມີຂໍ້ຫຍຸ້ງຍາກຈຳນວນໜຶ່ງເປັນຕົ້ນດ້ານວິຊາການຍັງຈຳກັດບາງດ້ານ; ມີນ້ຳໃຊ້ໃນລະດູແລ້ງຂ້ອນຂ້າງບໍ່ພຽງພໍ ແລະ ບັນຫາອື່ນໆທີ່ຕິດພັນຈຳນວນໜຶ່ງທີ່ຈະໄດ້ມີຄວາມພະຍາມຍາມແກ້ໄຂໃນຕໍ່ໜ້າເພື່ອຍົກລະດັບການຜະລິດໃຫ້ສູງກວ່າປີຜ່ານມາເລື້ອຍໆ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**